San Diego City Schools

SD CS

# Fact Sheet

ລະດູໜາວ 2004

## ບົດສລູບຂອງການກະທຳຜິດທີ່ພາໃຫ້ຖືກສັ່ງຢຸດຊົ່ວຄາວ ຫລື ຖືກໄລ່ອອກ

ການໄລ່ອອກໂຮງຮຽນແມ່ນ "ຍ້າຍນັກຮຽນອອກຈາກການເບິ່ງແຍງ ແລະ ການຄວບຄຸມ, ຫລື ການດູແລທົ່ວໄປຂອງເຈົ້າໜ້າທີ່ ໂຮງຮຽນ." ນັກຮຽນທີ່ຖືກໄລ່ອອກນັ້ນ ອາດຈະບໍ່ໄດ້ເຂົ້າຮ່ວມໃນໂຄງການ ຫລື ກິຈະກັມໃດໆຂອງສູນກາງສຶກສາ, ຮວມທັງໂຄງການຮຽນດ້ວຍຕົນເອງ. ລະບຽບປົກຄອງ ເລກທີ 6295 ໄດ້ບົ່ງນະໂຍບາຍຂອງສູນກາງສຶກສາໄວ້ລະອຽດກ່ຽວກັບການໄລ່ອອກ ແລະ ລະບຽບປົກຄອງ ເລກທີ 6290 ໄດ້ວາງຂອບເຂດໄວ້ສຳລັບການສັ່ງຢຸດຊົ່ວຄາວ. ກົດລະບຽບທັງສອງຢ່າງນີ້ສາມາດຂໍເອົາຈາກໂຮງຮຽນຂອງເດັກທ່ານ ຫລື ອ່ານທີ່ຄອມພິວເຕີໄດ້ ໃນ www.sandi.net/policy.

| ຂໍ້ສລູບ |
| --- |
| ❖ ນັກຮຽນອາດຈະບໍ່ຖືກສັ່ງຢຸດຊົ່ວຄາວ ຫລື ບໍ່ຖືກສເນີໃຫ້ໄລ່ອອກໂຮງຮຽນ ຈົນກວ່າຫົວໜ້າບໍຣິຫານການສຶກສາ ຫລື ຫົວໜ້າໜ່ວຍໂຮງຮຽນຂອງເດັກທ່ານພົບໄດ້ ວ່ານັກຮຽນຜູ້ນັ້ນໄດ້ລະເມີດລະບຽບການປົກຄອງເລກທີ 6295 ຫລື 6290 ຂອງການສັ່ງຢຸດຊົ່ວຄາວ ແລະ/ຫລື ການໄລ່ອອກໂຮງຮຽນ ດັ່ງນີ້ ຫລື ຫລາຍຂໍ້. |
| ❖ ໄດ້ກະທຳຜິດຢູ່ໃນໂຮງຮຽນ ຫລື ກິຈະກັມຂອງໂຮງຮຽນນອກເຂດໂຮງຮຽນ ແມ່ນຮຽກຮ້ອງໃຫ້ສັ່ງຢຸດໂຮງຮຽນທັນທີ ແລະ ສເນີແນະໃຫ້ໄລ່ອອກໂຮງຮຽນ ພາຍໃຕ້ນະໂຍບາຍ "ບໍ່ໂຍະຍານເປັນອັນຂາດ" |
| ❖ ນັກຮຽນອາດຈະບໍ່ຖືກສັ່ງຢຸດຊົ່ວຄາວ ຫລື ໄລ່ອອກໂຮງຮຽນ ນອກຈາກວ່າ ການກະທຳນັ້ນກ່ຽວຂ້ອງກັບກິຈະກັມຂອງໂຮງຮຽນ ຫລື ກ່ຽວກັບການມາເຂົ້າໂຮງຮຽນ. |
| ❖ ສະພາການສຶກສາເທົ່ານັ້ນ ທີ່ອາດຈະໄລ່ນັກຮຽນອອກໄດ້. |

ນັກຮຽນອາດຈະບໍ່ຖືກສັ່ງຢຸດຊົ່ວຄາວ ຫລື ຖືກນໍາຈະເນາໃຫ້ໄລ່ອອກໂຮງຮຽນ ຈົນກວ່າຫົວໜ້າບໍຣິຫານການສຶກສາ ຫລື ຫົວໜ້າໜ່ວຍໂຮງຮຽນຂອງເດັກ ກໍານົດໄດ້ວ່ານັກຮຽນຜູ້ນັ້ນໄດ້ລະເມີດດັ່ງນີ້ ຫລື ຫລາຍຂໍ້ ຕໍ່ລະບຽບການສັ່ງຢຸດຊົ່ວຄາວ ແລະ/ຫລື ລະບຽບການໄລ່ອອກໂຮງຮຽນດັ່ງຕໍ່ໄປນີ້:

- ການທໍາຮ້າຍການທໍາຮ້າຍຮ່າງກາຍເຖິງຂັ້ນບາດເຈັບ–ຮວມທັງສ້າງຕົ້ນເຫດ, ພຍາຍາມເຮັດໃຫ້ເກີດບາດເຈັບແກ່ຮ່າງກາຍ; ຫລື ທໍາໃຫ້ຢ້ານກົວຈົນເຮັດໃຫ້ຮ່າງກາຍບາດເຈັບ; ເຈຕນາໃຊ້ກໍາລັງທໍາລາຍ ຫລື ທໍາໂຫດຮ້າຍກັບຄົນອື່ນ, ຍົກເວັ້ນການປ້ອງກັນຕົວ; ປ້ອງກັນການທໍາຮ້າຍ ຫລື ການຂູ່ຂູ່ຂອງພະນັກງານໂຮງຮຽນ, ການເຈຕນາ ຫລື ພຍາຍາມຂົ່ມຂູ່ ຫລື ທໍາລາຍຊຸບຕີ ເພື່ອການແກ້ແຄ້ນ.
- ອາວຸດຕ່າງໆ–ຮວມທັງການຄອບຄອງ, ການຂາຍ ຫລື ການໃຫ້ ປືນສຸກຂະເນີດ, ມີດສຸກຂະເນີດ, ສິ່ງທີ່ລະເບີດສຸກຂະເນີດ, ຫລື ສິ່ງຂອງທີ່ເປັນອັນຕລາຍຢ່າງອື່ນໆ.
- ຢາເສບຕິດ, ເຫລົ້າ ຫລື ເຄື່ອງມຶນເມົາສຸກຂະເນີດ–ຮວມທັງການຄອບຄອງ, ການໃຊ້, ເອົາໃຫ້, ຂາຍ, ການມຶນເມົາຈາກເຄື່ອງທີ່ຜິດກົດໝາຍເຫລົ່ານີ້. ເພີ່ມເຕີມກໍ່, ເມື່ອພົບເຫັນຄັ້ງທີໜຶ່ງ ຫລື ຄັ້ງທີສອງ ວ່າຄອບຄອງຊາກະເປັນຈໍານວນນ້ອຍກວ່າໜຶ່ງອອນ ກໍສາມາດນໍາໄປສູ່ການສັ່ງຢຸດຊົ່ວຄາວ ແລະ ການຍຶດຄັ້ງທີສາມໃນການຄອບຄອງ, ໃຊ້, ຫລື ການມຶນເມົາ ໃນສິ່ງເຫລົ່ານີ້ນັ້ນ ສາມາດນໍາໄປສູ່ການໄລ່ອອກໂຮງຮຽນ.
- ວັດຖຸຕ່າງໆແທນເຫລົ້າເຄື່ອງກົດໝາຍເກືອດຫ້າມ–ທີ່ສັ່ງໃຫ້, ເອົາໃຫ້ ແລະ/ຫລື ຂາຍສິ່ງເຫລົ່ານີ້ ໂດຍໃຊ້ເປັນຢາເສບຕິດ ຫລື ເປັນເຫລົ້າ.
- ການລັກປຸ້ນ ຫລື ບັງຄັບຂົ່ມຂູ່–ຮວມທັງການພຍາຍາມປຸ້ນ ຫລື ບັງຄັບຂົ່ມຂູ່.
- ການທໍາລາຍຊັບສົມບັດຂອງໂຮງຮຽນ ຫລື ຂອງເອກະຊົນ–ພຍາຍາມຫລືວາງເສັ້ນທາງຍ້ອນການທໍາລາຍ.
- ຂໍ້ລັກຊັບສົມບັດ–ພຍາຍາມລັກ, ໄດ້ລັກ, ຫລື ຮັບເອົາເຄື່ອງຂອງຈາກການລັກມາ.
- ຢາສູບ–ການຄອບຄອງ, ສເນີໃຫ້, ຈັດຮຽນ ຫລື ເຈຣະຈາເພື່ອຂາຍ.
- ຄວາມລາມົກຫຍາບຄາຍບໍ່ສຸພາບ–ກະທໍາຄວາມລາມົກຫຍາບຄາຍ, ນິສັຍພຶດຕິກໍາບໍ່ມີຄວາມສຸພາບ.
- ເຄື່ອງມືເພື່ອໃຊ້ຢາເສບຕິດ–ການຄອບຄອງ, ສເນີໃຫ້, ຈັດຮຽນ ຫລື ເຈຣະຈາວາງແຜນເພື່ອການຂາຍ.
- ການທໍາລາຍລົບກວນ, ຝ່າຝືນ–ລົບກວນກິຈະກັມຂອງໂຮງຮຽນ ຫລື ທໍາການຝ່າຝືນເຈົ້າໜ້າທີ່ປົກຄອງຂອງໂຮງຮຽນ.
- ການລວງລໍາລົບລູ່ທາງເພດ (ປີທີ 4–12)–ສໍາລັບພວກນັກຮຽນປີທີ 4–12 ນັ້ນ ອາດຈະຖືກໄລ່ອອກໂຮງຮຽນເມື່ອພຶດຕິການອັນນີ້ເກີດຂຶ້ນ
- ການຄຸກຄາມທີ່ຮ້າຍແຮງ (ປີທີ 4–12)–ກະໃຫ້ເກີດ, ກະທໍາໃຫ້ຢ້ານກົວ, ພຍາຍາມກະທໍາໃຫ້ເກີດຂຶ້ນ, ຫລື ຮ່ວມຢູ່ໃນການກະທໍາ. ສໍາລັບພວກນັກຮຽນປີທີ 4–12 ອາດຈະຖືກໄລ່ອອກໂຮງຮຽນເມື່ອພຶດຕິການນີ້ເກີດຂຶ້ນ.
- ການເຮັດໃຫ້ຢ້ານກົວ ແລະ ຂູ່ເຂັນໃຫ້ຢ້ານ–ການລວງລໍາລົບລູ່, ຂູ່ເຂັນ, ຫລື ກະທໍາໃຫ້ຢ້ານກົວ ແກ່ນັກຮຽນຜູ້ໃດຜູ້ໜຶ່ງທີ່ເປັນພິຍານໃນເວລາປະພຶດບໍ່ດີ ທີ່ປ້ອງກັນບໍ່ໃຫ້ເປັນພິຍານ ຫລື ເພື່ອແກ້ແຄ້ນນັກຮຽນຜູ້ເປັນພິຍານນັ້ນ.
- ການລວງລໍາລົບລູ່ (ປີທີ 4–12)–ການລົບກວນ, ການຂູ່ເຂັນ, ຫລື ທໍາໃຫ້ຢ້ານກົວ ແກ່ນັກຮຽນຜູ້ໃດຜູ້ໜຶ່ງ ຫລື ກຸ່ມນັກຮຽນ ຫລື ພະນັກງານປົກຄອງໂຮງຮຽນໂດຍສິ່ງຂອງຫລືຕັ້ງໃຈສ້າງໃຫ້ (1) ລົບກວນການຮຽນໃນຫ້ອງຮຽນ, ຫລື (2) ເກີດມີສິ່ງແຫລກແຍກບໍ່ເປັນລະບຽບ, ຫລື (3) ການຂູ່ເຂັນ ຫລືເປັນປໍລະປັກຕໍ່ສະພາບແວດລ້ອມໃນການສຶກສາຮໍ່າຮຽນ. ສໍາລັບພວກນັກຮຽນປີທີ 4–12 ອາດຈະຖືກໄລ່ອອກໂຮງຮຽນເມື່ອພຶດຕິການນີ້ເກີດຂຶ້ນ.
- ປືນປອມ–ການຄອບຄອງປືນປອມ.
- ການເຮັດໃຫ້ຢ້ານກົວແບບທໍາການຮ້າຍໃສ່ພະນັກງານໂຮງຮຽນ ຫລື ຕໍ່ຊັບສົມບັດໂຮງຮຽນ–ການຂົ່ມຂູ່ ຫລື ຄໍາເວົ້າທີ່ຢ້ານກົວເພື່ອສ້າງເຫດຮ້າຍເຖິງຕາຍ, ໃຫ້ຮ່າງກາຍບາດເຈັບຮ້າຍແຮງ ຫລື ທໍາລາຍຊັບສົມບັດຕ່າງໆ.
- ການໃຊ້ໃບສັ່ງຢາເສບຕິດ–ການເອົາໃຫ້, ການຂາຍ, ຫລື ພຍາຍາມຂາຍ ໃບສັ່ງຢາເສບຕິດ **Soma.**

–ມີຕໍ່–

# San Diego City Schools

# Fact Sheet

ບໍ່ມີນັກຮຽນຄົນໃດທີ່ຈະຖືກສັ່ງພັກຊົ່ວຄາວ ຫລື ຖືກໄລ່ອອກໂຮງຮຽນຕໍ່ການກະທຳຜິດທີ່ແຈ້ງຢູ່ຂ້າງເທິງນີ້ ນອກຈາກວ່າການກະທຳນັ້ນກ່ຽວຂ້ອງກັບກິດຈະກຳຂອງໂຮງຮຽນ ຫລື ກ່ຽວຂ້ອງກັບການມາໂຮງຮຽນ. ນັກຮຽນອາດຈະຖືກສັ່ງພັກຊົ່ວຄາວ ຫລື ຖືກໄລ່ອອກໂຮງຮຽນໄດ້ທຸກເວລາ ຖ້າຜິດໃນການກະທຳທີ່ແຈ້ງໄວ້ຂ້າງເທິງ, ຮວມທັງ, ແຕ່ບໍ່ຈຳກັດວ່າ (ກ) ລະຫວ່າງຢູ່ໃນເດີ່ນຫລີ້ນຂອງໂຮງຮຽນ; (ຂ) ລະຫວ່າງໄປ ຫລື ມາຈາກໂຮງຮຽນ; (ຄ) ລະຫວ່າງກິນອາຫານທ່ຽງ, ຢູ່ໃນເຂດ ຫລື ນອກເຂດໂຮງຮຽນ; (ງ) ໃນເວລາ, ຫລື ລະຫວ່າງໄປຫລື ມາຈາກ, ກິດຈະກຳທີ່ໂຮງຮຽນອຸປຖຳ. ຖ້ານັກຮຽນຫາກຖືກຈັບທາງນອກເຂດໂຮງຮຽນນັ້ນ, ເຂົາເຈົ້າຈະຖືກສັ່ງພັກຊົ່ວຄາວໃນເວລານັ້ນ ຫລື ໃນເວລາທີ່ກັບມາໂຮງຮຽນ.

ຄວາມຜິດອັນໃດອັນໜຶ່ງທີ່ກະທຳຜິດພາຍໃນເຂດໂຮງຮຽນ ຫລື ໃນກິດຈະກຳທາງນອກເຂດໂຮງຮຽນ ທີ່ຮຽກຮ້ອງໃຫ້ສັ່ງພັກຊົ່ວຄາວ ແລະ ທີ່ພິຈາລະນາໄລ່ອອກໂຮງຮຽນນັ້ນແມ່ນຢູ່ພາຍໃຕ້ນະໂຍບາຍຫລັກ "ບໍ່ໂຍະຍານ". ສຳຫລັບລາຍລະອຽດນັ້ນ, ຂໍໃຫ້ອ່ານຢູ່ທີ່ກົດລະບຽບການປົກຄອງ 6295.

ການຜິດຕໍ່ນະໂຍບາຍຫລັກບໍ່ໂຍະຍານນັ້ນ ຮຽກຮ້ອງ ໃຫ້ມີການພິຈາລະນາໄລ່ອອກໂຮງຮຽນ. ການກະທຳຜິດເຫລົ່ານີ້ແມ່ນ:

ການກະທຳຜິດທີ່ນັກຮຽນທຸກໆຄົນ ຕ້ອງຖືກລົງໂທດ

- ຄອບຄອງ, ຂາຍປືນ ຫລື ໃຊ້ປືນ (ຊຶ່ງລະອິບາຍຢູ່ໃນກົດເດັກອາຍຸຕໍ່າກວ່າ 18 ປີ (*United States Codes Section 921*)
- ການຈັບມີດແນມີດໃສ່ຄົນອື່ນ. ("ມີດ" ໝາຍເຖິງ ດາບສັ້ນ, ມີດສັ້ນ, ຫລື ອາວຸດອື່ນໆທີ່ເຮັດໃຫ້ເປັນ, ຄົນໃຊ້ແທງຄົນສຳຫລັບເປັນສິ່ງສູນເສຍ, ອາວຸດທີ່ມີໃບມີດທີ່ຍາວກວ່າ 3 1/2 ນິ້ວ (ສາມນິ້ວເຄິ່ງ), ມີດພັບທີ່ມີເຂັມຊຶ່ງລັອກບ່ອນ, ຫລື ມີດແຖທີ່ບໍ່ມີເຄື່ອງປົກຫຸ້ມໄວ້.)
- ການຂາຍສິ່ງທີ່ເກືອດຫ້າມຊຶ່ງຜິດກົດໝາຍ (ມີຢູ່ໃນກົດເພື່ອສຸຂະພາບ ແລະ ຄວາມປອດໄພ Code Sections 11053 et seq.)
- ການຈັບບາຍເພື່ອທາງເພດ ຫລື ການທຳຮ້າຍທາງກາຍ
- ການຄອບຄອງສິ່ງຂອງລະເບີດ

ສຳຫລັບນັກຮຽນມັທຍົມ

- ອາວຸດຕ່າງໆ, ການປະພຶດທີ່ຮຸນແຮງ ແລະ ການຕໍ່ອດຕີກັບຜູ້ເບື້ອງບົດ. ພວກນັກຮຽນຊັ້ນໂຮງຮຽນພາກກາງ, ມັທຍົມຕົ້ນ, ແລະ ມັທຍົມພາກປາຍ ທີ່ເຂົ້າຮ່ວມໃນເຫດການຕໍ່ອດຕີກັນທີ່ທຳໃຫ້ເກີດບາດເຈັບຫລາຍກວ່າ ສາມເທື່ອ ຫລື ເກີນນັ້ນ ພາຍໃນໜຶ່ງປີ ອາດຈະຖືກສັ່ງພັກຊົ່ວຄາວ ຫລື ພິຈາລະນາໄລ່ອອກໂຮງຮຽນ. ນອກນັກຮຽນທີ່ຄອບຄອງປືນ, ມີດ, ລະເບີດ, ຫລື ສິ່ງອື່ນໆທີ່ເປັນອັນຕລາຍຢູ່ໃນໂຮງຮຽນນັ້ນຈະຖືກສັ່ງພັກ ແລະ ພິຈາລະນາໄລ່ອອກໂຮງຮຽນ. ສຳຫລັບສິ່ງກ່ຽວຂ້ອງກັບຫລັກບໍ່ໂຍະຍານນັ້ນ, ວັດຖຸທີ່ໃຊ້ໃນການເຮັດໃຫ້ຢ້ານກົວນັ້ນ ຈະຖືວ່າເປັນອາວຸດ ເຖິງວ່າມັນເປັນຂອງໃຊ້ທຳມະດາທີ່ບໍ່ແມ່ນອາວຸດຕ່ຳດາມ. ໃນກໍລະນີທີ່ພວກນັກຮຽນລະເມີດກົດລະບຽບກ່ຽວກັບອາວຸດ, ຈະຕ້ອງໄດ້ລາຍງານຫາຕຳຫລວດໂຮງຮຽນ ຫລື ຕຳຫລວດທ້ອງແຖນທັນທີ.
- ເຫລົ້າ, ຢາສູບ, ແລະ ຢາເສບຕິດອື່ນໆ. ນະໂຍບາຍການໃຊ້ວັດຖຸເສບຕິດ ຂອງສູນກາງສຶກສາໄດ້ພິຈາລະນາເຈາະຈົງໃນການໄລ່ອອກໂຮງຮຽນ ສຳຫລັບການກະທຳຜິດຄັ້ງທີໜຶ່ງໃນການນຳເອົາໃຊ້, ຂາຍ, ຫລື ຄອບຄອງວັດຖຸສິ່ງຂອງອັນຕລາຍຕ່າງໆທີ່ມີເກືອດຫ້າມ, ນອກຈາກຢາສູບ; ເມື່ອລະເມີດນະໂຍບາຍຫ້າມເດັກຢາສູບເທື່ອສີ່ຄັ້ງແລ້ວ, ນັກຮຽນຜູ້ນັ້ນຈະຖືກສັ່ງພັກຫ້າ (5) ວັນ ພ້ອມດ້ວຍພິຈາລະນາໄລ່ອອກໂຮງຮຽນ.
- ການປຸ້ນລັກ ຫລື ບັງຄັບຂູເຂັນ
- ການເຮັດໃຫ້ບາດເຈັບຮ້າຍແຮງ
- ການທຳຮ້າຍ ແລະ ທຳຮ້າຍທາງກາຍໃຫ້ບາດເຈັບ ແກ່ພະນັກງານໂຮງຮຽນ
- ການຄອບຄອງ, ຂາຍ ຫລື ໃຊ້ ປືນປອມ/ປືນຫລິ້ນເດັກນ້ອຍ

ມີພຽງແຕ່ສະພາການສຶກສາເທົ່ານັ້ນ ທີ່ອາດສາມາດໄລ່ນັກຮຽນອອກໂຮງຮຽນໄດ້. ການຕັດສິນຂອງສະພາທີ່ຈະໄລ່ນັກຮຽນອອກໂຮງຮຽນນັ້ນຕ້ອງໄດ້ອີງຕາມຫລັກຖານໃນເລື່ອງທີ່ຖືກກ່າວຫາວ່າຜິດ ໃນລະຫວ່າງຂັ້ນຕອນສຸດ ກ່ອນຈະເຖິງເວລາສະພາພິຈາລະນາທົບທວນໄລ່ອອກໂຮງຮຽນ.

*ອຸປຖຳ ຕີພິມໂດຍມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: Placement and Appeals Office: (619) 725-5660
Media inquires: (619) 725-5578
**www.sandi.net**

"ບໍລິການຊ່ວຍເຫລືອນັກຮຽນເກືອບ 138,000 ຄົນ, ສູນກາງສຶກສາແຂວງຊານດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟໍເນັຍ, ມີໂຮງຮຽນທັງໝົດປະມານ 200 ແຫ່ງ ແລະ ມີພະນັກງານທີ່ຮັບເຫົາຕຳແໜ່ງເຕັມເວລາຫລາຍກວ່າ 14,500 ຄົນ (ເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ), ໂຮງຮຽນເຂດສຶກສາແຂວງຊານດິເອໂກປັບປຸງຄວາມສຳເຣັດເປັນພິເສດໃນການສອບວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນໂຮງຮຽນກຽມອະນຸບານ, (Pre-K) ເຖິງປີທີ 12. ສູນກາງສຶກສາໄດ້ຕັ້ງສິນໃຈເພື່ອຊ່ວຍເຫລືອບັນດາໂຮງຮຽນຕ່າງໆ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນຢູ່ໃນຫ້ອງໂດຍຍານຕຶກໂຮງຮຽນແລະ ວັດຖຸການຮຽນທີ່ທັນສະໄໝ ແລະ ໂດຍການພົວພັນພໍ່ແມ່, ຄູອາຈານ, ແລະ ຊຸມຊົນເຂົ້າໃນການດຳເນີນງານຂອງການສຶກສາ."

---

ພາລະໜ້າທີ່ຂອງໂຮງຮຽນເຂດສຶກສາແຂວງຊານດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊ່ວຍຊູຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.